# 4.3.3 ວັດຖຸປະສົງ ແລະ ເປົ້າໝາຍ

## ກຳນົດວັດຖຸປະສົງ ແລະ ເປົ້າໝາຍ

### *ວັດຖຸປະສົງດ້ານສິ່ງແວດລ້ອມ*

ວັດຖຸປະສົງດ້ານສິ່ງແວດລ້ອມແມ່ນເປົ້າໝາຍທີ່ອົງການຈັດຕັ້ງໜຶ່ງໄດ້ກຳນົດໄວ້ໂດຍມັກຈະເປັນໃນເຊີງປະລິມານເພື່ອຊ່ວຍໃນການບັນລຸຜົນຕາມທີ່ນະໂຍບາຍ ສິ່ງແວດລ້ອມໄດ້ກຳນົດໄວ້ວ່າດ້ວຍ ການປັບປຸງ ແລະ ປ້ອງກັນ ມົນລະພິດຢ່າງຕໍ່ເນື່ອງ.
ເມື່ອໃດຫາກເຖິງ ເວລາທີ່ເໝາະສົມ, ຄວນຈະແຍກແຕ່ລະວັດຖຸປະສົງອອກ ລະອຽດ ແລະ ວາງໃຫ້ບັນດາພະແນກການ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຊ່ວຍໃຫ້ໄດ້ບັນລຸວັດຖຸປະສົງໂດຍ ລວມຂອງສິ່ງແວດລ້ອມ.
ຕົວຢ່າງວັດຖຸປະສົງຂອງສິ່ງແວດລ້ອມ ເຊັ່ນ:

- ຫຼຸດຜ່ອນການປ່ອຍສານ sulphur dioxide ຈາກບັນດາການດຳເນີນການຜະລິດຂອງໂຮງງານ ໃຫ້ໄດ້ 20% ໃນປີ 2003.
- ຫຼຸດຜ່ອນປະລິມານຂີ້ເຫຍື້ອທີ່ຈະນຳໄປຖິ້ມທີ່ສະໜາມໃຫ້ໄດ້ 25% ພາຍໃນສອງປີ.
- ຫຼຸດຜ່ອນການນຳໃຊ້ພະລັງງານ (ເຊັ່ນ: ໄຟຟ້າ, ນ້ຳມັນ, ຖ່ານຫີນ, ແກສ) ໃຫ້ໄດ້ 5% ຕໍ່ປີໃນຫ້າປີຕໍ່ໜ້າ.
- ຫຼຸດຜ່ອນຈຳນວນຂະບວນການ ຫຼື ການເຮັດໃຫ້ນ້ຳເຢັນ ໂດຍໃຊ້ ການໝູນວຽນກັບ ຫຼື ວິທີແບບທີ່ປະຫຍັດອື່ນໆໃຫ້ໄດ້ 20% ໃນໄລຍະສອງປີ.
- ຫຼຸດຜ່ອນຄ່າຂອງ BOD ຂອງບັນດານ້ຳທີ່ປ່ອຍອອກສູ່ທຳມະຊາດ, ສານແຂວນລອຍ, ໂລຫະ, ແລະ/ຫຼື ສານອິນຊີຕ່າງໆ ໃຫ້ໄດ້ 5% ຕໍ່ປີໃນລະຍະຫ້າປີຕໍ່ໜ້າ.
- ຫຼຸດຜ່ອນປະລິມານຂອງເສຍຈາກອາຫານປາຈາກການດຳເນີນການລ້ຽງປາໃຫ້ໄດ້ 10% ຕໍ່ປີ.
- ຫຼຸດຜ່ອນການນຳໃຊ້ຢາຂ້າແມງໄມ້ ແລະ ຢາຂ້າຫຍ້າທີ່ໃຊ້ໃນການກະສິກຳໃຫ້ໄດ້ 5% ຕໍ່ປີຈົນກວ່າມັນຈະໝົດໄປ.
- ລົບລ້າງການນຳໃຊ້ສານທີ່ທຳລາຍຊັ້ນໂອໂຊນໃນທຸກໆການດຳເນີນການຂອງບໍລິສັດໃຫ້ໝົດໄປໃນປີ 2005.
- ປ່ຽນມານຳໃຊ້ນ້ຳສີທີ່ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມໃນປີໜ້າ.
- ທົດແທນບັນດາວັດຖຸດິບທີ່ເປັນພິດຕໍ່ກັບພວກປາດ້ວຍສານທີ່ປອດສານພິດ ພາຍໃນງວດສະຫຼຸບພາສີຊຸດໜ້າ.
- ນຳເອົາແຜນການເຝິກອົບຮົມດ້ານຈິດສຳນຶກທາງດ້ານກົດໝາຍທີ່ລົບຖ້ວນໄປເຝິກໃຫ້ທຸກໆຜູ້ບໍລິຫານອາວຸໂສ, ຫົວໜ້າພະແນກ, ຜູ້ຊີ້ນຳ ແລະ ພະນັກງານຫຼັກແຫຼ່ງ ໃນໄລຍະທ້າຍປີ. ປະເມີນຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບບັນຫາ, ແລະ ຖ້າຈຳເປັນຄວນມີການມອບໝາຍວຽກຄືນໃໝ່.
- ຫຼຸດຜ່ອນການປ່ອຍບັນດາອະນຸພາກຈາກການຕົ້ມເພື່ອໃຫ້ພະລັງງານ ໃຫ້ໄດ້ 20% ໃນປີ 2003, ແລະ ອີກ 10% ພາຍໃນທ້າຍປີ 2005.
- ໃນທ້າຍງວດສະຫຼຸບພາສີຊຸດໜ້າ, ໃຫ້ອອກແບບການບັນຈຸຂອງສິນຄ້າໃຫ້ສາມາດນຳມາໃຊ້ຄືນໄດ້.
- ປູກປ່າຄືນໃໝ່ພາຍໃນໜຶ່ງປີຂອງການເກັບກ່ຽວໂດຍແນໃສ່ບັນດາຊະນິດທີ່ສາມາດຕອບສະໜອງທາງດ້ານຄວາມຫຼາກຫຼາຍ, ຄຸນຄ່າທາງດ້ານຊີວິດທຳມະຊາດ ແລະ ປະໂຫຍດທາງດ້ານການຄ້າ.
- ການຕັດໄມ້ປຸກສ້າງຈະຕ້ອງຕັດໄດ້ໃນສະເພາະບ່ອນທີ່ບໍ່ມີ "ຄວາມສ່ຽງ" ຕໍ່ການການສູນເສຍຂອງຊະນິດທຳມະຊາດ.
- ຫຼຸດຜ່ອນການສູນເສຍນ້ຳມັນຈາກການຮົ່ວໄຫຼຈາກຖັງບັນຈຸ ແລະ ຈາກທໍ່ສົ່ງໃຫ້ໜ້ອຍກ່ວາ 50 ການລອນຕໍ່ປີ.
- ລົບລ້າງການປ່ອຍຄວັນອາຍເສຍຈາກຍານພາຫະນະ ແລະ ຫຼຸດຜ່ອນການຮົ່ວໄຫຼຂອງນ້ຳມັນຫຼໍ່ລື່ນໃຫ້ໄດ້ໜຶ່ງເທື່ອຕໍ່ປີຕໍ່ພາຫະນາໜຶ່ງຄັນ.

**ISO 14001 ຂໍ້ທີ4.3.3 ວ່າດ້ວຍວັດຖຸປະສົງຂອງ ແລະ ເປົ້າໝາຍ ເວົ້າວ່າ:**

ອົງການຈັດຕັ້ງຄວນຈະສ້າງ ແລະຮັກສາບັນດາວັດຖຸປະສົງ ແລະ ເປົ້າໝາຍທີ່ໄດ້ບັນທຶກໄວ້ແລ້ວ <u>ໃຫ້ເໝາະສົມກັບລະດັບ ແລະ ໜ້າທີ່</u> ພາຍໃນອົງການຈັດຕັ້ງ. ວັດຖຸປະສົງ ແລະ ເປົ້າໝາຍຈະຕ້ອງແທດເໝາະກັບນະໂຍບາຍຂອງສິ່ງແວດລ້ອມ ເຊິ່ງປະກອບມີ ການເຄື່ອນໄຫວກ່ຽວກັບການປ້ອງກັນມົນລະພິດ. ເມື່ອມີການຮ່າງ ແລະ ທົບທວນບັນດາວັດຖຸປະສົງ ແລະ ເປົ້າໝາຍອົງການຈັດຕັ້ງຄວນຄຳນຶງເຖິງ:

- ເງື່ອນໄຂທາງດ້ານກົດໝາຍ ແລະ ອື່ນໆ
- ບັນຫາສິ່ງແວດລ້ອມທີ່ສຳຄັນ
- ທາງເລືອກທາງດ້ານເຕັກໂນໂລຊີ
- ເງື່ອນໄຂທາງດ້ານການເງິນ, ການດຳເນີນການ ແລະ ດ້ານທຸລະກິດ.
- ຄວາມຄິດເຫັນຂອງຜູ້ສົນໃຈອື່ນໆ.

*ເປົ້າໝາຍກ່ຽວກັບສິ່ງແວດລ້ອມ*

ເປົ້າໝາຍກ່ຽວກັບສິ່ງແວດລ້ອມທີ່ມີລັກສະນະສະເພາະ ແລະ ມີການສະແດງອອກທີ່ວັດແທກໄດ້ຈະນຳພາໄປເຖິງການບັນລຸວັດຖຸປະສົງກ່ຽວກັບສິ່ງແວດລ້ອມ ວັດຖຸປະສົງອາດຈະກຳນົດສະເພາະທົ່ວອົງການຈັດຕັ້ງ, ພະແນກການ, ສ່ວນເປົ້າໝາຍທີ່ກ່ຽວຂ້ອງຈະອີງຕາມອົງການຈັດຕັ້ງ, ພະແນກການ ແຕ່ອາດຈະແຍກອອກເປັນຜູ້ປະກອບສ່ວນຍ່ອຍຂອງກຸ່ມຄົນ ຫຼື ບຸກຄົນ. ທັງໝົດນີ້, ເປົ້າໝາຍຕ່າງໆທີ່ບັນລຸຜົນນັ້ນຄວນແມ່ນຜົນຂອງການສຳເລັດວັດຖຸປະສົງ ດັ່ງຕົວຢ່າງ:

*ວັດຖຸປະສົງກ່ຽວກັບສິ່ງແວດລ້ອມ*

- ຫຼຸດຜ່ອນຂີ້ເຫຍື້ອທີ່ຈະໄປຖິ້ມທີ່ສະໜາມໃຫ້ໄດ້ 25% ພາຍໃນທ້າຍປີ 2003.

*ເປົ້າໝາຍຂອງສິ່ງແວດລ້ອມ*

- ແຫຼ່ງທີ່ຕິດຕາມ, ຊະນິດ, ແລະ ຈຳນວນຂີ້ເຫຍື້ອ ທີ່ຈະໄປຖິ້ມທີ່ສະໜາມຈາກທຸກບ່ອນຂອງອົງການຈັດຕັ້ງສຳລັບທຸກເດືອນ.
- ກຳນົດໂອກາດສູງສຸດໃນການຫຼຸດຜ່ອນຂີ້ເຫຍື້ອພາຍໃນທ້າຍໄຕຣມາດທຳອິດຂອງປີ 2002.
- ກຳນົດວັດປະສົງ, ເປົ້າໝາຍ ແລະ ແຜນໃນ ການຫຼຸດຜ່ອນຂີ້ເຫຍື້ອ ທາງດ້ານປະລິມານໃນແຕ່ລະບ່ອນໃຫ້ໄດ້ໃນທ້າຍໄຕຣມາດທີສອງຂອງປີ 2002 ແລະໃຫ້ ສາມາຫຼຸດຜ່ອນໄດ້ທັງໝົດ 25% ໃນທ້າຍປີ 2003.
- ສ້າງແຜນປະຕິບັດງານໃນທ້າຍໄຕຣມາດທີສາມຂອງປີ 2002.
- ປະລິມານທີ່ຕິດຕາມ, ຊະນິດ, ແລະ ແຫຼ່ງຂອງຂີ້ເຫຍື້ອທີ່ຈະໄປຖິ້ມທີ່ສະໜາມໃນປີໜ້າ, ປະຕິບັດການປັບປຸງແປງການວິທີການເຮັດວຽກໃນບ່ອນທີ່ເຫັນວ່າຈຳເປັນ ເພື່ອໃຫ້ບັນລຸການຫຼຸດຜ່ອນຕາມທີ່ຕ້ອງການ.
- ທົບທວນຄວາມຄືບໜ້າ ແລະ ຕັ້ງວັດຖຸປະສົງ ແລະຄາດໝາຍໃໝ່ສຳລັບປີ 2004, 2005 ໃນທ້າຍ ໄຕຣມາດທີສາມຂອງປີ 2003.

## ຂະບວນການດຳເນີນການຕັ້ງວັດຖຸປະສົງ ແລະ ເປົ້າໝາຍ

ດັ່ງດ້ານອື່ນໆທີ່ຢູ່ໃນ ISO 14001, ການມີສ່ວນຮ່ວມຢ່າງເຕັມສ່ວນຂອງ "ຜູ້ສົນໃຈ" ແມ່ນເປັນປັດສະຍາທີ່ດີທີ່ສຸດສຳລັບໃຊ້ໃນການກຳນົດວັດຖຸປະສົງ ແລະ ເປົ້າໝາຍ, ຫຼື ເວົ້າອີກຢ່າງໜຶ່ງວ່າຜູ້ທີ່ຈະຮັບຜິດຊອບຕໍ່ກັບການບັນລຸບັນດາວັດຖຸປະສົງ ແລະ ເປົ້າໝາຍ ຄວນຈະໄດ້ມີການປະກອບຄວາມຄິດເຫັນເຂົ້າໃນການກຳນົດຕັ້ງເປົ້າໝາຍດັ່ງກ່າວ. ວິທີການນີ້ຈະຊ່ວຍໃຫ້ ເສີມຂະຫຍາຍສິດເປັນ ເຈົ້າຂອງວັດຖຸປະສົງ, ແລະ ມີຄວາມກະຕືລືລົ້ນຕໍ່ໜ້າວຽກຫຼາຍກ່ວາ ບັນດາພະແນກການ ແລະ ບຸກຄົນ ຜູ້ທີ່ຕ້ອງການຈະເຮັດໜ້າວຽກນັ້ນໃຫ້ສຳເລັດ.

## *ລັກສະນະສະເພາະຂອງ ISO 14001*

ມາດຕະຖານ ISO 14001 ຕ້ອງການຫຼາຍໆເງື່ອນໄຂທີ່ຕ້ອງນໍາມາພິຈາລະນາ ໃນການກໍານົດວັດຖຸປະສົງດ້ານສິ່ງແວດລ້ອມ. ໂດຍສະເພາະມີ:

- ການປະຕິບັດນະໂຍບາຍສິ່ງແວດລ້ອມ ເພື່ອການປັບປຸງ, ການປ້ອງກັນມົນລະພິດ, ແລະ ການປະຕິບັດກົດໝາຍ ແລະ ເງື່ອນໄຂອື່ນໆຢ່າງຕໍ່ເນື່ອງ.
- ການເອົາໃຈໃສ່ໃນການຄວບຄຸມບັນຫາສໍາຄັນດ້ານສິ່ງແວດລ້ອມ - ການເຄື່ອນໄຫວ, ຜະລິດຕະພັນ ແລະ ການບໍລິການ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມສູງ ກວ່າໝູ່ - ເມື່ອມີການຫຼຸດຄວາມສໍາຄັນຂອງມັນລົງ (ຕົວຢ່າງ, ຄວາມສ່ຽງຕ່າງໆທີ່ກ່ຽວຂ້ອງ) ກໍໝາຍຄວາມວ່າເປັນການຫຼຸດຜ່ອນຜົນກະທົບຂອງມັນລົງໄປໃນຕົວ.
- ເມື່ອມາພິຈາລະນາບັນດາທາງເລືອກທາງດ້ານເຕັກໂນໂລຊີ ແລະ ດ້ານການເງິນ, ດ້ານການດໍາເນີນການ, ແລະ ດ້ານທຸລະກິດແລ້ວ ໝາຍຄວາມວ່າ ຈຸດປະສົງ ແລະ ເປົ້າໝາຍຂອງສິ່ງແວດລ້ອມຈະຕ້ອງມີລັກສະນະປະຕິບັດໄດ້ໂດຍອີງຕາມຄວາມສາມາດນໍາໃຊ້ເຕັກໂນໂລຊີທີ່ສາມາດຫາມາໄດ້ໃນຂອບເຂດຂອງງົບປະມານທີ່ມີ, ແລະໃຫ້ສອດຄ່ອງກັບຍຸດທະສາດຂອງການດໍາເນີນການ ແລະ ທຸລະກິດ. ເວົ້າອີກຢ່າງໜຶ່ງວ່າ, ວັດຖຸປະສົງ ແລະ ເປົ້າໝາຍຕ້ອງມີລັກສະນະເປັນຈິງ ແລະ ນໍາໄປປະຕິບັດໄດ້, ບໍ່ແມ່ນພຽງແຕ່ ເປັນ ຄວາມໄຝ່ຝັນ ຫຼື ລາຍການຄວາມປາດຖະໜາ ຢາກເຮັດເທົ່ານັ້ນ.
- ຄວາມຄິດເຫັນຂອງບັນດາຝ່າຍຜູ້ສົນໃຈ. ແມ່ນໃຜທີ່ເຮົາຖືວ່າເປັນຝ່າຍຜູ້ສົນໃຈ? ບຸກຄົນ, ກຸ່ມຄົນ, ອົງການ, ຫຼື ຊຸມຊົນໃດກໍໄດ້ທີ່ອາດໄດ້ຮັບ ຜົນກະທົບ ຫຼື ມີຫຸ້ນສ່ວນໃນການດໍາເນີນການດ້ານອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດ EMS. ບັນດາກຸ່ມດັ່ງກ່າວສາມາດມີຫຼາຍໆພາກສ່ວນ, ປະກອບມີດັ່ງນີ້:

- ບັນດາພະນັກງານລັດ ໃນລະດັບຊາດ, ຂົງເຂດ/ແຂວງ, ແລະ ໃນລະດັບທ້ອງຖິ່ນ.
- ບັນດາຕົວແທນຂອງຊຸມຊົນທ້ອງຖິ່ນ.
-ບັນດາກຸ່ມຜູ້ສົນໃຈສາທະລະນະ ແລະ ກຸ່ມຜູ້ສົນ ໃຈອື່ນໆ.

ຄວາມຄິດເຫັນຂອງບັນດາພາກສ່ວນທີ່ສົນໃຈຈະເປັນປະໂຫຍດຊ່ວຍໃນການຕັດສິນໃຈຂອງອົງການຈັດຕັ້ງທີ່ກ່ຽວຂ້ອງກັບການສື່ສານບັນຫາສິ່ງແວດລ້ອມຂອງອົງການ.

## *ການໄດ້ຮັບຄວາມຄິດເຫັນຈາກຝ່າຍຜູ້ສົນໃຈ*

ບາງອົງການຈັດຕັ້ງຈະນໍາມາບັນດາຄວາມຄິດເຫັນຂອງຜູ້ສົນໃຈມາເກັບໄວ້ 'ເສີຍໆ' ແລະ ມັກຈະແກ້ຕົວວ່າ ຖ້າບໍ່ມີການທັກທ້ວງຈາກສາທາລະນະຊົນສະແດງວ່າ ບໍ່ມີບັນຫາຫຍັງ. ISO 14001 ຄາດວ່າບັນດາອົງ ການຈັດຕັ້ງຈະນໍາເອົາສິ່ງລິເລີ້ມ ແລະ , ບັນດາ ຄວາມຄິດເຫັນ ແລະ ຄໍາແນະນໍາຈາກບັນດາຜູ້ສົນໃຈ ມາພິຈາລະນາ. ມີຫຼາຍໆບໍລິສັດຈະປັບປ່ຽນຈຸດໝາຍ ດັ່ງກ່າວໂດຍປ່ຽນແປງປັດສະຍາຈາກວິທີສະທ້ອນຄືນ ຢ່າງດຽວ ມາເປັນລັກສະນະສະທ້ອນໂຕ້ຕອບເຊິ່ງກັນ ແລະ ກັນ.

ມີຫຼາຍເຕັກນິກສາມາດຈະນໍາໃຊ້ເພື່ອນໍາເອົາຄວາມຄິດເຫັນຂອງບັນດາຜູ້ສົນໃຈ, ແຕ່ໂດຍທົ່ວໄປແລ້ວການປະຊຸມຊ້ອງໜ້າແບບຕ່າງໆສາມາດຈະລວບລວມຄວາມເປັນຈິງໄດ້ຫຼາຍກວ່າ ແລະ ດັ່ງນັ້ນຈຶ່ງເປັນຂໍ້ມູນທີ່ມີປະໂຫຍດຫຼາຍກວ່າ. ການປະຊຸມສາມາດທໍາການສໍາພາດຈາກ ການສົນທະນາເປັນກຸ່ມ, ການປະຊຸມຂອງສະທາລະນະ, ຈາກບ້ານເຮືອນ, ເຂດວາງສະແດງຂອງສະທາລະນະ ຫຼື ວິທີໃດກໍຕາມ ທີ່ເໝາະກັບອົງການຈັດຕັ້ງ ແລະ ວັດທະນະທໍາຂອງທ້ອງຖິ່ນ. ອີກແນວໜຶ່ງຈະໄດ້ຮັບຜົນໜ້ອຍ ແຕ່ກໍດີກວ່າບໍ່ມີຫຍັງນັ້ນຄື: ການສໍາພາດທາງໂທລະສັບ ຫຼື ໃຊ້ແບບສອບຖາມ. ມັນເປັນພື້ນຖານສໍາຄັນ ທີ່ທາງຜູ້ຮັບຜິດຊອບຝ່າຍຈັດຕັ້ງຂອງບໍລິສັດເຂົ້າມີສ່ວນຮ່ວມໃນການລວບລວບຄໍາຕິຊົມເພື່ອຫຼີກລ້ຽງການຄັດຄ້ານ ຫຼື ຕ້ານຄືນ, ມີການອະທິບາຍ ຫຼື ປັບປຸງ ຕໍາແໜ່ງໃນອົງການຈັດຕັ້ງ. ຍ້ອນພວກເຂົາເຈົ້າບໍ່ມີ 'ລາຍລະອຽດດ້ານບຸກຄະລາກອນ', ບາງເທື່ອການເກັບກໍາຂໍ້ມູນ ຈາກ ກຸ່ມຜູ້ທີ່ເປັນກາງສາມາດຈະປະສົບຜົນສໍາເລັດໃນການນໍາເອົາຄວາມຈິງມາໄດ້ຫຼາຍກວ່າ,

ຂໍ້ມູນໂປ່ງໃສກວ່າຈາກບັນດາຜູ້ຈັດການ ຫຼື ບັນດາລູກຈ້າງຂອງອົງການຈັດຕັ້ງ.

### *ຜົນປະໂຫຍດຈາກການສຳຫຼວດຝ່າຍຜູ້ສົນໃຈ*

ໃນການຊອກເອົາຄວາມຄິດເຫັນຈາກຜູ້ສົນໃຈຂອງສະທາລະນະເຂົ້າໃນແຜນງານຂອງ EMS ຢ່າງຫ້າວຫັນ, ໝາຍເຖິງອົງການຈັດຕັ້ງໜຶ່ງໄດ້ສະແດງການປະຕິບັດຂອງຕົນໃນການຄຸ້ມຄອງສິ່ງແວດລ້ອມ, ແລະ ຄວາມສົນໃຈທີ່ຈະເປັນພົນລະເມືອງດີ. ການສຳຫຼວດຝ່າຍຜູ້ສົນໃຈເປັນໄລຍະ ສາມາດເຮັດໃຫ້ອົງການຈັດຕັ້ງໜຶ່ງສາມາດ 'ກຳຈັງຫວະ' ຂອງຊຸມຊົນໃຕ້ການຄວບຄຸມດຳເນີນການຂອງຕົນໄດ້ກວ້າງຂວາງກວ່າ, ແລະ ຕອບຮັບການປ່ຽນ ແປງດ້ານຄຸນຄ່າ, ການເບິ່ງເຫັນບັນຫາ, ແລະ ຄວາມຄາດຫວັງ ໃນຕໍ່ໜ້າ. ເປັນໜ້າປະຫຼາດໃຈທີ່ການປະທ້ວງຮຽກ ຮ້ອງຈາກ ໜຶ່ງ ຫຼື ຫຼາຍໜ່ວຍງານຂອງຊຸມ ຈະມີ ໜ້ອຍລົງເມື່ອມີການສື່ສານ ແລະ ແລກປ່ຽນຄວາມ ຄິດຄວາມເຫັນເປັນປົກກະຕິກັບອົງການຈັດຕັ້ງທີ່ຈັດຕັ້ງປະຕິບັດ EMS. ສິ່ງສຳຄັນທີ່ສຸດຄື ບັນດາຜູ້ສົນໃຈຈາກພາກສ່ວນຕ່າງໆມີຄວາມປາດຖະໜາຢາກນຳເອົາຄວາມຄິດເຫັນ ແລະ ນຳເອົາສຽງຂອງເຂົາເຈົ້າໄປພິຈາລະນາ. ເວົ້າອີກຢ່າງໜຶ່ງ, ໝາຍຄວາມວ່າເຮັດຕື່ມອີກເທື່ອໜຶ່ງມັນເປັນສິ່ງທີ່ຖືກຕ້ອງທີ່ຄວນຈະເຮັດ.

### *ຄວາມຈິງອື່ນໆກ່ຽວກັບຈຸດປະສົງ ແລະ ເປົ້າໝາຍ*

ມີ 10 ຕົວຢ່າງທີ່ຄວນເອົາໃຈໃສ່ ເມື່ອ ISO 14001 ກຳນົດຂະບວນການດຳເນີນການ ຫຼື ຜົນຮັບຈາກຂະບວນການນັ້ນຈະຕ້ອງສ້າງເປັນເອກະສານ ຫຼື ບັນທຶກ, ໝາຍຄວາມວ່າຈະຕ້ອງໄດ້ຂຽນເປັນລາຍລັກອັກສອນໃສ່ເຈັ້ຽ ຫຼື ບັນທຶກໂດຍອີເລັກໂຕຣນິກ. ຈຸດປະສົງ ແລະ ເປົ້າໝາຍດ້ານສິ່ງແວດລ້ອມແມ່ນ 1 ໃນ 10 ເງື່ອນໄຂທີ່ຕ້ອງເຮັດເປັນເອກະສານ.

ຈຸດປະສົງ ແລະ ເປົ້າໝາຍຄວນຈະໃຫ້ເປັນສິ່ງທີ່ສາມາດປະຕິບັດ ແລະ ບັນລຸໄດ້ໃນຂອບເຂດ ເວລາທີ່ກຳນົດໄວ້, ໃນຂະນະດຽວກັນນັ້ນກໍຍົກລະດັບອົງການຈັດຕັ້ງໃຫ້ກ້າວເຂົ້າສູ່ລະດັບປັບປຸງການເຄື່ອນໄຫວໃໝ່. ການຈັດການມີສິດໜ້າທີ່ໃນການສະໜອງແຫຼ່ງຊັບພະຍາກອນໃຫ້ພຽງພໍ ເພື່ອເຮັດໃຫ້ພະນັກງານ ຫຼື ລູກຈ້າງບັນລຸໄດ້ແຕ່ລະວັດຖຸປະສົງ, ເຊິ່ງຄວນ ຈະມີການທົບທວນເປັນປະຈຳ ເພື່ອຮັບປະກັນໃຫ້ມີ ການສືບຕໍ່ຢ່າງເໝາະສົມ ແລະ ຕາມລະດັບ ບຸລິ ມະສິດ.

## ສະຫຼຸບບັນດາຈຸດສຳຄັນ

- ການກຳນົດ ແລະ ປະຕິບັດວັດຖຸປະສົງ ແລະ ເປົ້າໝາຍລ່ວງໜ້າ ເປັນກຸນແຈສຳຄັນໃນການບັນລຸການປັບປຸງ ແລະ ການປ້ອງກັນມົນລະພິດ ຢ່າງຕໍ່ເນື່ອງ ຕາມເງື່ອນໄຂ ນະໂຍບາຍສິ່ງແວດລ້ອມ ISO 14001 ຂອງອົງການຈັດຕັ້ງ.
- ເພື່ອໃຫ້ມີປະສິດທິຜົນ, ຈະຕ້ອງມີການບັນທຶກວັດຖຸປະສົງ ແລະ ເປົ້າໝາຍເປັນເອກະສານ, ມີລັກສະ ນະສະເພາະ, ວັດແທກໄດ້, ສາມາດບັນລຸຜົນບັນ ຈິງໄດ້ (ແຕ່ບໍ່ງ່າຍເກີນໄປ), ແລະ ປັບໃຫ້ທັນສະ ພາບ (ເຊັ່ນ ບຳລຸງຮັກສາ).
- ເປົ້າໝາຍດ້ານສິ່ງແວດລ້ອມສະໜັບສະໜູນໃຫ້ບັນດາຈຸດປະສົງໄດ້ບັນລຸຜົນ ໂດຍແຍກອອກເປັນເປົ້າໝາຍປະຕິບັດຍ່ອຍໃຫ້ແກ່ແຕ່ລະພະແນກການ, ກຸ່ມຄົນ ຫຼື ບຸກຄົນຜູ້ທີ່ເຮັດວຽກເພື່ອບັນລຸຈຸດອັນດຽວກັນ.
- ເມື່ອມີການກຳນົດວັດຖຸປະສົງ ແລະ ເປົ້າໝາຍຕ້ອງໄດ້ພິຈາລະນາດັ່ງຕໍ່ໄປນີ້: ເງື່ອນໄຂທາງດ້ານກົດໝາຍ, ລະບຽບການ, ແລະ ເງື່ອນໄຂທີ່ພົວພັນອື່ນໆ; ບັນຫາດ້ານສິ່ງແວດລ້ອມທີ່ສຳຄັນ; ທາງເລືອກດ້ານເຕັກໂນໂລຊີ, ທຸລະກິດ, ການເງິນ, ແລະ ເງື່ອນໄຂໃນການດຳເນີນການ; ແລະ ບັນດາຄວາມຄິດເຫັນຂອງພາກສ່ວນຜູ້ສົນໃຈ.
- ການສຳຫວດພາກສ່ວນຜູ້ສົນໃຈຈະເປັນການດີໃນການຮັບເອົາຄວາມຄິດເຫັນຂອງສາທະລະນະເພື່ອຊ່ວຍດັດແປງແຜນງານ ແລະ ຈຸດປະສົງ ແລະ ເປົ້າ ໝາຍຂອງການຄຸ້ມຄອງສິ່ງແວດລ້ອມ. ນອກຈາກ ນີ້, ມັນຍັງຊ່ວຍໃນການປັບປຸງການພົວພັນກັບ ທ້ອງ ຖິ່ນ ແລະ ຊຸມຊົນອື່ນໆ.